ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດວັນທີ 30 ກັນຍາ 2025

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 – 2
ບົດລາຍງານຂອງຄະນະບໍລິຫານ	3
ໃບລາຍງານຖານະການເງິນ	4 – 5
ໃບລາຍງານຜົນການດຳເນີນງານ	6
ໃບລາຍງານຜົນການດຳເນີນງານ (ໄລຍະເກົ້າເດືອນ)	7
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	8
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ (ໄລຍະເກົ້າເດືອນ)	9
ໃບລາຍງານກະແສເງິນສົດ	10 – 11
ໃບລາຍງານກະແສເງິນສົດ (ໄລຍະເກົ້າເດືອນ)	12 – 13
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	14 – 27

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013. ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ສະບັບເລກທີ 0010/ຈຫວ ຂອງ ບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 25 ຕຸລາ 2024 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 043/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 5 ທັນວາ 2024.

ນະວັນທີ 30 ກັນຍາ 2025, ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສົ່ງເສີມກະສິກຳ, (ii) ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊິຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ ສາທາລະນະລັດ ປະຊາຊົນຈີນ, (iv) ມວນຊົນທົ່ວໄປ, ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ທຶນຈົດທະບຽນສ້າງຕັ້ງບໍລິສັດແມ່ນ 111,111,120,000 ກີບ ສຳລັບໄລຍະສິ້ນສຸດ ວັນທີ 30 ກັນຍາ 2025. ນະວັນທີ 31 ທັນວາ 2024, ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດແມ່ນ 100,000,000,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການທີ່ປຶກສາທາງດ້ານການເງິນ; ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ; ນາຍໜ້າຊື້ ຂາຍ ຫຼັກຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ; ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິຫານກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດແມ່ນຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025 ແລະ ນະມື້ອອກປົດລາຍງານມີ ດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ໝູໄຊ ພຸມສຸວັນ	ປະທານສະພາບໍລິຫານ	ແຕ່ງຕັ້ງ ວັນທີ 10 ພຶດສະພາ 2024
ທ່ານ ລີ ຊາງເຫວີຍ	ຮອງປະທານສະພາບໍລິຫານ	ແຕ່ງຕັ້ງ ວັນທີ 22 ກັນຍາ 2017
ທ່ານ ໂຈ ຄຸນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງວັນທີ 05 ພຶດສະພາ 2023
ທ່ານ ຈາງ ຫົງບິນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ສົມພິງ ບໍລິບຸດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ລີນ ລີ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ຫວາງ ເວີຍ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ຣສ. ປອ. ປິຍະ ວົງພິດ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 23 ພຶດສະພາ 2023
ທ່ານ ນະ ຈັນຕະລີວົງ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການ ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025 ແລະ ນະມື້ອອກບົດລາຍງານ ມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ລີ ລິນ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ປອ ສຸດທິເດດ ບຸນລືໄຊ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 25 ກຸມພາ 2020
ທ່ານ ພິງສະຫວັດ ລືນາມ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຕົວແທນດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດ ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025 ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ລີ ລິນ - ຜູ້ອຳນວຍການໃຫຍ່.

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີຂໍນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດ ນະວັນທີ ແລະ ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນດັ່ງກ່າວ. ໃນຂັ້ນຕອນການກະກຽມບົດລາຍງານການເງິນ, ຄະນະບໍລິຫານຄວນປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກໆການປະຕິບັດທີ່ບໍ່ສອດຄ່ອງກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າ ບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງບໍລິສັດຕ້ອງຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ໄດ້ບັນທຶກໄວ້ນັ້ນ ແມ່ນມີຄວາມຖືກຕ້ອງ ສົມເຫດສົມຜົນ ຢູ່ຕະຫຼອດເວລາ, ບົດລາຍງານຖານະທາງການເງິນຂອງບໍລິສັດ ສາມາດເຊື່ອຖື ແລະ ສອດຄ່ອງກັບການບັນທຶກລະບົບບັນຊີທີ່ໄດ້ນຳໃຊ້. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີການຄົ້ນຫາ ແລະ ປ້ອງກັນກ່ຽວກັບຄວາມບໍ່ໂປ່ງໃສ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

ການຮັບຮອງເອກະສານລາຍງານການເງິນ

ພວກຂ້າພະເຈົ້າຂໍຮັບຮອງເອກະສານລາຍງານການເງິນສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025 ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມຂອງຄະນະອຳນວຍການ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລີ ລິນ

ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

ໃບລາຍງານຖານະການເງິນ
ນະວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

ຊັບສິນ	*ບົດອະທິບາຍເລກທີ*	*30 ກັນຍາ 2025*	*31 ທັນວາ 2024*
A. **ຊັບສິນໝຸນວຽນ**		**129,756,465,975**	**71,466,398,822**
I. ເງິນ	4	***55,825,271,601***	***5,789,133,108***
1. ເງິນສົດໃນຄັງ		132,544,571	-
2. ເງິນຝາກຢູ່ທະນາຄານ		32,141,365,905	1,592,743,476
3. ເງິນຝາກລູກຄ້າ		23,551,361,125	4,196,389,632
II. ໜີ້ຕ້ອງຮັບໝຸນວຽນ		***25,814,903,091***	***23,837,214,674***
1. ໜີ້ຕ້ອງຮັບການຄ້າ		25,510,098,457	20,918,894,065
2. ໜີ້ຕ້ອງຮັບອື່ນໆ		-	1,680,000,000
3. ດອກເບ້ຍຕ້ອງຮັບ		304,804,635	1,238,320,609
III. ການລົງທຶນໄລຍະສັ້ນ		***40,200,836,570***	***40,694,899,300***
1. ການລົງທຶນໃນຫຼັບຊັບ	5	23,183,446,570	28,421,563,300
2. ເງິນຝາກມີກຳນົດໄລຍະສັ້ນ	6	15,500,000,000	10,000,000,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ		1,517,390,000	2,273,336,000
IV. ຊັບສິນໝຸນວຽນອື່ນໆ		***7,915,454,713***	***1,145,151,740***
1. ຊັບສິນໝຸນວຽນອື່ນໆ	7	7,915,454,713	1,145,151,740
B. **ຊັບສິນບໍ່ໝຸນວຽນ**		**79,617,389,739**	**93,594,903,560**
I. ຊັບສິນບັດຄົງທີ່		***2,371,608,659***	***2,343,726,160***
1. ຊັບສິນບັດຄົງທີ່ມີຕົວຕົນ	8	2,221,173,054	2,341,132,363
2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ	9	1,953,556	2,593,797
3. ຊັບສິນບັດຄົງທີ່ພວມກໍ່ສ້າງ		148,482,048	-
II. ການລົງທຶນໄລຍະຍາວ		**77,245,781,080**	***91,251,177,400***
1. ເງິນຝາກມີກຳນົດໄລຍະຍາວ		-	15,000,000,000
2. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ	10	65,229,420,000	63,560,640,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ	11	12,016,361,080	12,690,537,400
ລວມຊັບສິນ		**209,373,855,713**	**165,061,302,382**

ສະກຸນເງິນ: ກີບ

ໜີ້ສິນ ແລະ ທຶນເຈົ້າຂອງ	ບົດອະທິບາຍ ເລກທີ	30 ກັນຍາ 2025	31 ທັນວາ 2024
A. ໜີ້ສິນ		**54,915,536,707**	**39,781,466,697**
I. ໜີ້ສິນໝຸນວຽນ		***54,915,536,707***	***39,781,466,697***
1. ເງິນກູ້ຢືມໄລຍະສັ້ນ	12	26,246,725,366	26,248,421,223
2. ລາຍຮັບລໍຖ້າສະສາງ	13	8,635,769,765	8,635,769,765
3. ໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ	14	9,305,774,486	4,196,389,632
4. ໜີ້ຕ້ອງສົ່ງອື່ນໆ		10,701,133,090	332,120,467
5. ຜົນປະໂຫຍດຂອງພະນັກງານ	15	26,134,000	368,765,610
B. ທຶນເຈົ້າຂອງ		**154,458,319,006**	**125,279,835,685**
I. ທຶນ		***154,458,319,006***	***125,279,835,685***
1. ທຶນຈົດທະບຽນທີ່ຖອກແລ້ວ	16	111,111,120,000	100,000,000,000
2. ສ່ວນເກີນມູນຄ່າຮຸ້ນ		2,360,038,519	-
3. ກຳໄລສະສົມ		24,326,475,427	10,206,778,619
4. ຄັງສຳຮອງຕາມລະບຽບການ		3,697,423,512	2,107,500,518
5. ຄັງສຳຮອງສ່ວນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ		11,936,190,000	11,938,485,000
6. ຄັງສຳຮອງຂະຫຍາຍທຸລະກິດ		1,027,071,548	1,027,071,548
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**209,373,855,713**	**165,061,302,382**

ອະນຸມັດໂດຍ:

ທ່ານ ສີ ລິນ
ຜູ້ອຳນວຍການໃຫຍ່

ກວດກາ:

ທ່ານ ວຽງສະຫວັນ ໄຊຍະລາດ
ພະແນກກວດກາພາຍໃນ

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025*	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2024*
1. **ລາຍຮັບ**		**12,310,603,284**	**6,590,626,035**
ເຊິ່ງໃນນັ້ນ:			
- ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ	17	11,416,363,590	6,184,781,607
- ລາຍຮັບດອກເບ້ຍ		587,479,064	321,189,815
- ກຳໄລສຸດທິຈາກການຂາຍຫຼັກຊັບລົງທຶນ		(78,477,000)	4,000
- ລາຍຮັບອື່ນໆໃນການດຳເນີນງານ		385,237,630	84,650,613
2. **ລາຍຈ່າຍ**		**(6,944,657,424)**	**(448,001,730)**
ເຊິ່ງໃນນັ້ນ:			
- ລາຍຈ່າຍນາຍໜ້າ ແລະ ຄ່າທຳນຽມ	17	(583,338,682)	(466,416,310)
- ຂາດທຶນຕາມມູນຄ່າຍຸດຕິທຳຂອງການລົງທຶນໃນ ຫຼັກຊັບໄລຍະສັ້ນ		(154,925,180)	1,633,171,560
- ຄ່າໃຊ້ຈ່າຍບຸກຄະລາກອນ		(4,984,692,739)	(995,919,235)
- ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ		(89,575,597)	(12,888,257)
- ລາຍຈ່າຍດອກເບ້ຍ	18	-	(3,001,000)
- ລາຍຈ່າຍອື່ນໆໃນການດຳເນີນງານ		(1,132,125,227)	(602,948,488)
3. **ກຳໄລກ່ອນອາກອນ**		**5,365,945,859**	**6,142,624,305**
4. **ລາຍຈ່າຍອາກອນກຳໄລ**		-	-
5. **ກຳໄລສຸດທິຫຼັງອາກອນ**		**5,365,945,859**	**6,142,624,305**
ກຳໄລຕໍ່ຮຸ້ນ		4.83	6.14

ອະນຸມັດໂດຍ:

ທ່ານ ສີລິ ມ
ຜູ້ອຳນວຍການໃຫຍ່

ກວດກາ:

ທ່ານ ວຽງສະຫວັນ ໄຊຍະລາດ
ພະແນກກວດກາພາຍໃນ

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025

ລາຍການ	*ບົດອະທິບາຍ ເລກທີ*	*ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025*	*ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2024*
1. **ລາຍຮັບ**		**28,592,234,252**	**12,968,745,347**
ເຊິ່ງໃນນັ້ນ:			
- ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ	17	19,389,311,982	10,071,900,349
- ລາຍຮັບດອກເບ້ຍ		1,739,548,708	896,169,733
- ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ		1,975,160,320	1,274,985,500
- ກຳໄລສຸດທິຈາກການຂາຍຫຼັກຊັບລົງທຶນ		4,483,200,250	3,005,000
- ລາຍຮັບອື່ນໆໃນການດຳເນີນງານ		1,005,012,992	722,684,765
2. **ລາຍຈ່າຍ**		**(7,174,045,449)**	**(5,247,119,221)**
ເຊິ່ງໃນນັ້ນ:			
- ລາຍຈ່າຍນາຍໜ້າ ແລະ ຄ່າທຳນຽມ	17	(1,481,463,861)	(881,181,552)
- ຂາດທຶນຕາມມູນຄ່ຍຸດຕິທຳຂອງການລົງທຶນໃນ ຫຼັກຊັບໄລຍະສັ້ນ		4,815,151,020	1,072,946,190
- ຄ່າໃຊ້ຈ່າຍບຸກຄະລາກອນ		(7,472,857,888)	(2,854,092,688)
- ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ		(261,726,450)	(62,989,586)
- ລາຍຈ່າຍດອກເບ້ຍ	18	(125,194,500)	(128,128,500)
- ລາຍຈ່າຍອື່ນໆໃນການດຳເນີນງານ		(2,647,953,771)	(2,393,673,084)
3. **ກຳໄລກ່ອນອາກອນ**		**21,418,188,802**	**7,721,626,126**
4. **ລາຍຈ່າຍອາກອນກຳໄລ**		-	-
5. **ກຳໄລສຸດທິຫຼັງອາກອນ**		**21,418,188,802**	**7,721,626,126**
ກຳໄລຕໍ່ຮຸ້ນ		**19.28**	**7.72**

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ສີ ລີ
ຜູ້ອຳນວຍການໃຫຍ່

ກວດກາ:

ທ່ານ ວຽງສະຫວັນ ໄຊຍະລາດ
ຫົວໜ້າພະແນກກວດກາພາຍໃນ

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ	*ສ່ວນເກີນມູນຄ່າຮຸ້ນ*	*ຄ້າສຳຮອງຕາມລະບຽບການ*	*ຄ້າຂະຫຍາຍທຸລະກິດ*	*ຄ້າສຳຮອງສ່ວນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ*	*ກຳໄລສະສົມ*	*ລວມ*
ຍອດເຫຼືອນະວັນທີ 1 ກໍລະກົດ 2024	**100,000,000,000**	**-**	**975,420,695**	**1,027,071,548**	**(1,117,755,000)**	**1,597,062,035**	**102,481,799,278**
ກຳໄລສຸດທິສຳໄລຍະ	-	-	-	-	-	6,142,624,305	6,142,624,305
ຍອດເຫຼືອນະວັນທີ 30 ກັນຍາ 2024	**100,000,000,000**	**-**	**975,420,695**	**1,027,071,548**	**(1,117,755,000)**	**7,739,686,340**	**108,624,423,583**
-				-			-
ຍອດເຫຼືອນະວັນທີ 1 ກໍລະກົດ 2025	**111,111,120,000**	**2,360,038,519**	**3,697,423,512**	**1,027,071,548**	**11,936,406,000**	**24,516,085,568**	**154,648,145,147**
ກຳໄລສຸດທິສຳລັບໄລຍະ	-	-	-	-	-	5,365,945,859	5,365,945,859
ຈ່າຍເງິນປັນຜົນ	-	-	-	-	-	(5,555,556,000)	(5,555,556,000)
ຂາດທຶນຈາກມູນຄ່າຍຸດຕິທຳຂອງຫຼັກຊັບຖືຄອງເພື່ອຂາຍ	-	-	-	-	(216,000)	-	(216,000)
ຍອດເຫຼືອນະວັນທີ 30 ກັນຍາ 2025	**111,111,120,000**	**2,360,038,519**	**3,697,423,512**	**1,027,071,548**	**11,936,190,000**	**24,326,475,427**	**154,458,319,006**

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ... ...
ຜູ້ອຳນວຍການໃຫຍ່

ກວດກາ:

ທ່ານ ວຽງສະຫວັນ ໄຊຍະລາດ
ຫົວໜ້າພະແນກກວດກາພາຍໃນ

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານສ່ອນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ	*ສ່ວນເກີນມູນຄ່າຮຸ້ນ*	*ຄ້ຳສຳຮອງຕາມລະບຽບການ*	*ຄ້ຳຂະຫຍາຍທຸລະກິດ*	*ຄ້ຳສຳຮອງສ່ອນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ*	*ກຳໄລສະສົມ*	*ລວມ*
ຍອດເຫຼືອນະວັນທີ 1 ມັງກອນ 2024	**100,000,000,000**	-	**975,420,695**	**1,027,071,548**	**(1,117,755,000)**	**18,060,214**	**100,902,797,457**
ກຳໄລສຸດທິສຳໄລຍະ	-	-	-	-	-	7,721,626,126	7,721,626,126
ຍອດເຫຼືອນະວັນທີ 30 ກັນຍາ 2024	**100,000,000,000**	-	**975,420,695**	**1,027,071,548**	**(1,117,755,000)**	**7,739,686,340**	**108,624,423,583**
ຍອດເຫຼືອນະວັນທີ 1 ມັງກອນ 2025	**100,000,000,000**	-	**2,107,500,518**	**1,027,071,548**	**11,938,485,000**	**10,206,778,619**	**125,279,835,685**
ກຳໄລສຸດທິສຳລັບໄລຍະ	-	-	-	-	-	21,418,188,802	21,418,188,802
ຈ່າຍເງິນປັນຜົນ	-		-	-	-	(5,555,556,000)	(5,555,556,000)
ຫັກເຂົ້າຄ້ຳສຳຮອງຂະຫຍາຍທຸລະກິດ	-	-	1,589,922,994	-	-	(1,589,922,994)	-
ຂາດທຶນຈາກມູນຄ່າຍຸດຕິທຳຂອງຫຼັກຊັບຖືຄອງເພື່ອຂາຍ	-	-	-	-	(2,295,000)	-	(2,295,000)
ຖອກທຶນຈົດທະບຽນເພີ່ມ	11,111,120,000	2,360,038,519	-	-	-	-	13,471,158,519
ຍອດເຫຼືອນະວັນທີ 30 ກັນຍາ 2025	**111,111,120,000**	**2,360,038,519**	**3,697,423,512**	**1,027,071,548**	**11,936,190,000**	**24,326,475,427**	**154,458,319,006**

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ... ...
ຜູ້ອຳນວຍການໃຫຍ່

ກວດກາ:

ທ່ານ ວຽງສະຫວັນ ໄຊຍະລາດ
ຫົວໜ້າພະແນກກວດກາພາຍໃນ

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

ໃບລາຍງານກະແສເງິນສົດ
ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025*	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2024*
I. ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**5,365,945,859**	**6,142,624,305**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	8,9	89,575,597	12,888,257
ລາຍຈ່າຍດອກເບ້ຍ		-	3,001,000
ປ່ຽນແປງໃນມູນຄ່າຍຸຕິທຳຈາກການລົງທຶນໃນຫຼັກຊັບ		(154,925,180)	1,633,171,560
ຂາດທຶນສຸດທິສະສາງຊັບສິນບັດຄົງທີ່		-	-
ລາຍຮັບດອກເບ້ຍ		(587,479,064)	(321,189,815)
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		-	-
ການດັດແກ້ທຶນໝຸນວຽນ:			
ປ່ຽນແປງສຸດທິຂອງໜີ້ຕ້ອງຮັບ		(5,087,449,658)	(9,295,693,334)
ປ່ຽນແປງສຸດທິຂອງການລົງທຶນຫຼັກຊັບ		780,028,180	6,945,983,070
ປ່ຽນແປງສຸດທິຂອງຊັບສິນໝຸນວຽນອື່ນໆ		(6,802,236,261)	(1,666,646,203)
ປ່ຽນແປງສຸດທິຂອງໜີ້ຕ້ອງສົ່ງ		10,590,503,705	(52,894,163,611)
ປ່ຽນແປງສຸດທິຂອງລາຍຮັບລ່ຳ້າສະສາງ	13	-	
ປ່ຽນແປງຂອງຜົນປະໂຫຍດພະນັກງານ		(342,357,183)	-
ລາຍຮັບດອກເບ້ຍ		810,186,631	-
ອາກອນທີ່ໄດ້ຊຳລະ		-	-
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**4,661,792,627**	**(49,440,024,771)**
II. ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່	8,9	(9,238,000)	-
ຊັບສິນບັດທີ່ພວມກໍ່ສ້າງ		-	-
ຮັບຈາກການຂາຍຊັບສິນບັດຄົງທີ່		-	(14,000,000,000)
ລົງທຶນໃນເງິນຝາກໄລຍະຍາວ		-	15,000,000,000
ຮັບຈາກການໄຖ່ຖອນເງິນຝາກມີກຳນົດໄລຍະຍາວ		840,000	(784,695,000)
ຮັບຈາກການຂາຍ ຫຼັກຊັບປະເພດມີໄວ້ເພື່ອຂາຍ		949,997,920	(10,041,061,305)
ເງິນປັນຜົນຈາກການລົງທຶນໃນຫຼັກຊັບທຶນໃນຫຼັກຊັບ		-	(854,553,821)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**941,599,920**	**(10,680,310,126)**

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025*	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2024*
III. ກິດຈະກຳທາງການເງິນ			
ຈ່າຍເງິນປັນຜົນ		(5,555,556,000)	-
ການຊຳລະເງິນກູ້ຢືມ		-	(82,359,152)
ລາຍຈ່າຍດອກເບ້ຍ		-	(3,001,000)
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		**(5,555,556,000)**	**(85,360,152)**
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິຂອງເງິນສົດ		**47,836,547**	**(60,205,695,049)**

ອະນຸມັດໂດຍ:

ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

ກວດກາ:

ທ່ານ ວຽງສະຫວັນ ໄຊຍະລາດ
ຫົວໜ້າພະແນກກວດກາພາຍໃນ

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າພະແນກບັນຊີ

ໃບລາຍງານກະແສເງິນສົດ
ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍເລກທີ*	*ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025*	*ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2024*
I. ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**21,265,175,802**	**7,721,626,126**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	8,9	261,726,450	62,989,586
ລາຍຈ່າຍດອກເບ້ຍ		125,194,500	128,128,500
ປ່ຽນແປງໃນມູນຄ່າຍຸຕິທຳຈາກການລົງທຶນໃນຫຼັກຊັບ		4,815,151,020	1,072,946,190
ຂາດທຶນສຸດທິສະສາງຊັບສິນບັດຄົງທີ່		-	-
ລາຍຮັບດອກເບ້ຍ		(1,739,548,708)	(896,169,733)
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		(1,975,160,320)	(1,274,985,500)
ການດັດແກ້ທຶນໝຸນວຽນ:			
ປ່ຽນແປງສຸດທິຂອງໜີ້ຕ້ອງຮັບ		(2,911,204,391)	(9,185,372,136)
ປ່ຽນແປງສຸດທິຂອງການລົງທຶນຫຼັກຊັບ		422,965,710	5,983,436,250
ປ່ຽນແປງສຸດທິຂອງຊັບສິນໝຸນວຽນອື່ນໆ		(6,770,302,973)	(2,598,806,592)
ປ່ຽນແປງສຸດທິຂອງໜີ້ຕ້ອງສົ່ງ		15,478,716,798	1,513,355,601
ປ່ຽນແປງສຸດທິຂອງລາຍຮັບລໍຖ້າສະສາງ	13	(342,631,610)	(9,830,000)
ປ່ຽນແປງຂອງພັນປະໂຫຍດພະນັກງານ		2,673,064,680	534,969,733
ລາຍຮັບດອກເບ້ຍ		**21,265,175,802**	**7,721,626,126**
ອາກອນທີ່ໄດ້ຊຳລະ		-	-
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**31,302,827,639**	**3,052,288,026**
II. ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່	8,9	(141,126,900)	(16,274,700)
ຊັບສິນບັດທີ່ພວມກໍ່ສ້າງ		(5,500,000,000)	(12,000,000,000)
ຮັບຈາກການຂາຍຊັບສິນບັດຄົງທີ່		15,000,000,000	20,341,782,067
ລົງທຶນໃນເງິນຝາກໄລຍະຍາວ		(1,671,075,000)	(693,765,000)
ຮັບຈາກການໄຖ່ຖອນເງິນຝາກມີກຳນົດໄລຍະຍາວ		1,430,122,320	(8,608,220,560)
ຮັບຈາກການຂາຍ ຫຼັກຊັບປະເພດມີໄວ້ເພື່ອຂາຍ		2,360,038,519	-
ຮັບຈາກການຊື້/(ໄດ້ຮັບການຊຳລະ) ຂອງ/(ຈາກ) ຫຼັກຊັບຖືຄອງໄວ້ຈົນຄົບກຳນົດ		1,975,160,320	1,274,985,500
ເງິນປັນຜົນຈາກການລົງທຶນໃນຫຼັກຊັບທຶນໃນຫຼັກຊັບ		(148,482,048)	(2,047,574,971)
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**13,304,637,211**	**(1,749,067,664)**

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

ລາຍການ	ບົດອະທິບາຍ ເລກທີ	ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2025	ສຳລັບໄລຍະເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ 2024
III. ກິດຈະກຳທາງການເງິນ			
ຈ່າຍເງິນປັນຜົນ		(5,555,556,000)	-
ການຊຳລະເງິນກູ້ຢືມ		(1,695,857)	(100,674,964)
ລາຍຈ່າຍດອກເບ້ຍ		(125,194,500)	(128,128,500)
ເພີ່ມທຶນຈົດທະບຽນ		11,111,120,000	-
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		**5,428,673,643**	**(228,803,464)**
ເພີ່ມຂຶ້ນສຸດທິຂອງເງິນສົດ		**50,036,138,494**	**1,074,416,898**
ເງິນສົດໃນຕົ້ນປີ		**5,789,133,108**	**4,849,890,530**
ເງິນສົດໃນທ້າຍປີ	4	**55,825,271,602**	**5,924,307,428**

ອະນຸມັດໂດຍ:

ທ່ານ ສີ ສົມ
ຜູ້ອຳນວຍການໃຫຍ່

ກວດກາ:

ທ່ານ ວຽງສະຫວັນ ໄຊຍະລາດ
ຫົວໜ້າພະແນກກວດກາພາຍໃນ

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025

1. ຂໍ້ມູນບໍລິສັດ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ເປັນບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ເຊິ່ງດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງແຜນການ ແລະ ການລົງທຶນໃນວັນທີ 21 ມີຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013. ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ສະບັບເລກທີ 0010/ຈຫວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 25 ຕຸລາ 2024 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 043/LSCO ແມ່ນໄດ້ອອກໃຫ້ໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (LSCO) ໃນວັນທີ 5 ທັນວາ 2024.

ນະວັນທີ 30 ກັນຍາ 2025, ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສົ່ງເສີມກະສິກຳ, (ii) ບໍລິສັດ ລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ ສາທາລະນະລັດ ປະຊາຊົນຈີນ, (iv) ມອນຊົນທ໌ອໄປ, ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ທຶນຈົດທະບຽນສ້າງຕັ້ງບໍລິສັດແມ່ນ 111,111,120,000 ກີບ ສຳລັບໄລຍະສິ້ນສຸດ ວັນທີ 30 ກັນຍາ 2025. ນະວັນທີ 31 ທັນວາ 2024, ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດແມ່ນ 100,000,000,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການທີ່ປຶກສາທາງດ້ານການເງິນ; ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ; ນາຍໜ້າຊື້ ຂາຍ ຫຼັກຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ; ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ; ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິຫານກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດແມ່ນຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ, ສປປ ລາວ.

ພະນັກງານທັງໝົດຂອງບໍລິສັດນະວັນທີ 30 ກັນຍາ 2025 ມີ 23 ຄົນ (31 ທັນວາ 2024: 21 ຄົນ).

2. ພື້ນຖານໃນການກະກຽມ

ອີງຕາມກົດໝາຍການບັນຊີສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາຫົວໜ່ວຍທຸລະກິດທີ່ມີຜົນປະໂຫຍດສາທາລະນະ ລວມທັງບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນປະຈຳປີ. ອີງຕາມໜັງສືແຈ້ງການ ລົງວັນທີ 27 ເມສາ 2020, ອອກໂດຍກະຊວງການເງິນ, ບັນດາຫົວໜ່ວຍທຸລະກິດທີ່ມີຜົນປະໂຫຍດສາທາລະນະໄດ້ຮັບອະນຸຍາດໃຫ້ເລື່ອນການນຳໃຊ້ມາດຕະຖານການລາຍງານການເງິນສາກົນ ຈົນຮອດວັນທີ 1 ມັງກອນ 2026. ປະຈຸບັນ, ຄະນະບໍລິຫານກຳລັງກະກຽມແຜນການປະຕິບັດ IFRSs ໃຫ້ສອດຄ່ອງກັບການເອກະສານແຈ້ງການ.

ນະວັນທີ 30 ກັນຍາ 2025, ອັດຕາເງິນເຟີ້ສະສົມຂອງ ສປປ ລາວ ໃນໄລຍະ 36 ເດືອນທີ່ຜ່ານມາສູງກວ່າ 100%, ເຊິ່ງຈັດຢູ່ໃນກຸ່ມປະເທດທີ່ເສດຖະກິດມີພາວະອັດຕາເງິນເຟີ້ລະດັບສູງສຸດ ອີງຕາມການລາຍງານຈາກເວັບໄຊ້ຂອງທະນາຄານແຫ່ງ ສປປ ລາວ (www.bol.gov.la.com). ເຖິງຢ່າງໃດກໍຕາມ, ບໍລິສັດຍັງບໍ່ທັນປະຕິບັດນະໂຍບາຍການບັນຊີໃດໆ ຕໍ່ກັບຜົນກະທົບຈາກພາວະອັດຕາເງິນເຟ້ລະດັບສູງສຸດ ເນື່ອງຈາກຍັງບໍ່ມີຄຳແນະນຳສະເພາະຈາກກະຊວງການເງິນ ຕໍ່ກັບບັນຫາດັ່ງກ່າວ.

2. ພື້ນຖານໃນການກະກຽມ (ຕໍ່)

ສຳລັບໄລຍະສາມເດືອນຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025, ເອກະສານລາຍງານການເງິນປະຈຳປີຂອງບໍລິສັດ ໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ. ເອກະສານລາຍງານການເງິນ ແມ່ນໄດ້ຖືກລາຍງານເປັນສະກຸນເງິນລາວກີບ ("ກີບ") ເຊິ່ງແມ່ນສະກຸນເງິນຫຼັກໃນການເຮັດທຸລະກຳ ແລະ ຊຳລະສະສາງຂອງບໍລິສັດ.

ເອກະສານລາຍງານການເງິນລວມມີ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ ແລະ ສົດໃນການນຳໃຊ້ບໍ່ໄດ້ຖືກບຸກຄົນທີ່ບໍ່ໄດ້ແຈ້ງກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ຜົນການດຳເນີນງານທີ່ອະທິບາຍຂ້າງລຸ່ມນີ້ ແລະ ນອກນັ້ນເອກະສານລາຍງານການເງິນສະບັບນີ້ບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດ ອີງຕາມຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນ ແມ່ນຖືກກະກຽມ ເພື່ອໃຫ້ບໍລິສັດປະຕິບັດຕາມຂໍ້ກຳນົດໃນການລາຍງານໃຫ້ຜູ້ຖືຮຸ້ນຂອງ ບໍລິສັດ. ດ້ວຍເຫດຜົນດັ່ງກ່າວ, ເອກະສານລາຍງານການເງິນສະບັບນີ້ອາດບໍ່ເໝາະສົມແກ່ການນຳໃຊ້ເພື່ອຈຸດປະສົງອື່ນ ແລະ ຈະບໍ່ຖືກເປີດເຜີຍແກ່ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ປີການບັນຊີ

ປີການບັນຊີຂອງບໍລິສັດ ແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ບໍລິສັດໄດ້ນຳໃຊ້ໃນການກະກຽມເອກະສານລາຍງານການເງິນເຫຼົ່ານີ້ ແມ່ນສອດຄ່ອງກັບນະໂຍບາຍການນຳໃຊ້ໃນການກະກຽມເອກະສານລາຍງານການເງິນຂອງບໍລິສັດສຳລັບປີສິ້ນສຸດວັນທີ 31 ທັນວາ 2025.

3.1. ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດປະກອບມີ ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານ, ລວມທັງເງິນຝາກຂອງລູກຄ້າ.

ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານແມ່ນມີສະພາບຄ່ອງສູງ ແລະ ຖືການໃຊ້ເຂົ້າໃນການຄຸ້ມຄອງຄາໝັ້ນສັນຍາໄລຍະສັ້ນ.

ເງິນຝາກຂອງລູກຄ້າປະກອບມີ ເງິນຝາກຂອງຜູ້ລົງທຶນໃນທຸລະກຳການຊື້ຂາຍຫຼັກຊັບ. ບໍລິສັດຍັງໄດ້ຮັບຮູ້ມູນຄ່າທີ່ຊຳລະໃຫ້ແກ່ລູກຄ້າເປັນໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

3.2. ຊັບສິນບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ທີ່ມີຕົວຕົນ ລວມມີການປັບປຸງ ແລະ ການຕົບແຕ່ງ, ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ ແລະ ພາຫະນະ. ຊັບສິນບັດທີ່ທີ່ບໍ່ມີຕົວຕົນປະກອບດ້ວຍລາຍຈ່າຍກ່ອນການສ້າງຕັ້ງ ແລະ ຊ໋ອບແວ. ຊັບສິນບັດຄົງທີ່ທີ່ສະແດງຕາມມູນຄ່າຕົ້ນທຶນທີ່ຊື້ເຂົ້າຫັກລ້າງກັບຄ່າຫຼ້ຍຫ້ຽນສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບມີ ລາຄາຊື້ ບວກໃຫ້ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງໃນການປ່ຽນສະພາບຂອງຊັບສິນໃຫ້ຢູ່ໃນສະພາບພ້ອມສຳລັບການນຳໃຊ້.

ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້ເພີ່ມ, ການປັບປຸງ ແລະ ການປ່ຽນສະພາບຊັບສິນເພື່ອນຳໃຊ້ຄືນໃໝ່ ຈະຖືກຮັບຮູ້ເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ສ້ອມແປງຈະຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ, ຖ້າມີ.

ເມື່ອຊັບສິນຖືກຂາຍ ຫຼື ສະສາງອອກ, ມູນຄ່າຕົ້ນທຶນ ແລະ ຄ່າຫຼ້ຍຫ້ຽນສະສົມຈະຖືກຕັດອອກຈາກໃບສະຫຼຸບຊັບສິນບັດ ຂອງບົດລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນຈາກການສະສາງຕ່າງໆຈະຖືກສະແດງໃນໃບລາຍງານຜົນການດຳເນີນງານ.

3.3. ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ

ຄ່າຫຼ້ຍຫ້ຽນຂອງຊັບສິນບັດຄົງທີ່ ແມ່ນຄິດໄລ່ຕາມວິທີຫັກຄ່າຫຼ້ຍຫ້ຽນແບບສະໝ່ຳສະເໝີ ຕາມອັດຕາທີ່ໄດ້ກຳນົດຕາມອາຍຸການນຳໃຊ້ທີ່ປະເມີນໄວ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍລາຍໄດ້ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ຮັບຮອງໂດຍສະພາແຫ່ງຊາດ. ດ້ານລຸ່ມນີ້ແມ່ນອັດຕາປະຈຳປີທີ່ໄດ້ນຳໃຊ້:

ການປັບປຸງ ແລະ ການຕົບແຕ່ງ	10%
ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ	20%
ພາຫະນະ	20%
ຊ໋ອບແວ	50%

3.4. ທຸລະກຳເງິນຕາຕ່າງປະເທດ

ບັນດາທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດ ເຊິ່ງບໍ່ແມ່ນສະກຸນເງິນທີ່ບໍລິສັດໃຊ້ໃນການລາຍງານ ("ກີບ") ແມ່ນຖືກບັນທຶກໂດຍແປງຄ່າຕາມອັດຕາແລກປ່ຽນນະມື້ທີ່ທຸລະກຳເກີດຂຶ້ນ. ນະທ້າຍປີ, ຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກເປັນເງິນຕາຕ່າງປະເທດແມ່ນຈະຖືກຕີມູນຄ່າຕາມອັດຕາແລກປ່ຽນນະມື້ອອກເອກະສານລາຍງານການເງິນ. ທຸກສ່ວນຜິດຕ່ຽງຈາກອັດຕາແລກປ່ຽນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

3.5. ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າຈະຖືກບັນທຶກ ນະຕົ້ນທຶນ. ເງິນແຮສຳລັບຄ່າເສື່ອມຂອງໜີ້ຕ້ອງຮັບທາງການຄ້າຈະຖືກສ້າງຂຶ້ນເມື່ອມີຫຼັກຖານຢັ້ງຢືນວ່າ ບໍລິສັດຈະບໍ່ສາມາດເກັບໜີ້ໄດ້ໃນຈຳນວນທີ່ລູກຄ້າເປັນໜີ້ທັງໝົດ. ມູນຄ່າຂອງເງິນແຮແມ່ນສ່ວນຕ່າງລະຫວ່າງຍອດຍົກມາ ແລະ ມູນຄ່າໜີ້ຕ້ອງຮັບທາງການຄ້າທີ່ສາມາດເກັບຄືນໄດ້. ມູນຄ່າດັ່ງກ່າວນີ້ຈະເປັນມູນຄ່າຈາກການຄາດຄະເນທີ່ດີທີ່ສຸດ ຂອງຄະນະບໍລິຫານບໍລິສັດທີ່ຄາດວ່າຈະສາມາດເກັບໜີ້ໄດ້

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

3.6. ຫຼັກຊັບຖືຄອງໄວ້ເພື່ອຄ້າ

ຫຼັກຊັບຖືຄອງໄວ້ເພື່ອຄ້າ ສ່ວນໃຫຍ່ແມ່ນການລົງທຶນໃນຮຸ້ນຈົດທະບຽນ. ການລົງທຶນໃນຮຸ້ນຈົດທະບຽນທັງໝົດ ໃນເບື້ອງຕົ້ນແມ່ນຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ຖືກລາຍງານຕາມລາຄາຕະຫຼາດໃນຕໍ່ມາ. ສ່ວນປ່ຽນແປງຕາມລາຄາຕະຫຼາດຂອງຮຸ້ນແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

3.7. ຫຼັກຊັບຖືຄອງໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍປະກອບມີ ຫຼັກຊັບທຶນ ເຊິ່ງບໍ່ໄດ້ຖືກຈັດເປັນປະເພດ ຫຼື ກຳນົດໃຫ້ຖືໄວ້ເພື່ອການຄ້າ.

ຫຼັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າຕາມມູນຄ່າຍຸຕິທຳ.

ກຳໄລ ແລະ ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດຂອງທຶນໃນຄັງສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ. ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ ເຊິ່ງໄດ້ຖືກປັບປ່ຽນໃຫ້ເປັນກຳໄລ ຫຼື ຂາດທຶນສະສົມ. ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານວ່າເປັນ 'ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ' ເມື່ອໄດ້ມີການກຳນົດສິດໃນການຊຳລະ.

3.8. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ

ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດລວມມີ ກາສານໜີ້ ເຊິ່ງຖືຄອງໃນຮູບແບບທຸລະກິດທີ່ມີວັດຖຸປະສົງໃນການຖືຄອງຊັບສິນ ເພື່ອລວບລວມກະແສເງິນສົດຕາມສັນຍາ.

ກາສານໜີ້ທັງໝົດແມ່ນ ຖືກຕີມູນຄ່າໃນເບື້ອງຕົ້ນດ້ວຍມູນຄ່າຍຸດຕິທຳບວກຕົ້ນທຶນທາງກົງໃນການເຮັດທຸລະກຳທີ່ເພີ່ມຂຶ້ນ, ແລະ ຕໍ່ມາດ້ວຍການຫັກຄ່າເສື່ອມຕົ້ນທຶນ ໂດຍໃຊ້ວິທີດອກເບ້ຍທີ່ແທ້ຈິງ. ດອກເບ້ຍທີ່ໄດ້ຮັບໃນຂະນະທີ່ຖືຄອງການລົງທຶນຈົນຄົບກຳນົດຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຮັບດອກເບ້ຍ" ບົນພື້ນຖານຄ້າງຮັບ (ຄາມຶງເຖິງຜົນຕອບແທນທີ່ແທ້ຈິງຂອງຊັບສິນ) ເວັ້ນເສຍແຕ່ການເກັບລວບລວມແມ່ນມີຄວາມໜ້າສົງໃສ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.9. *ການຮັບຮູ້ລາຍຮັບ*

(i) ລາຍຮັບຈາກ ຄ່ານາຍໜ້າ ແລະ ຄ່າທຳນຽມ

(ກ) ລາຍຮັບຈາກການສະໜອງບໍລິການດ້ານນາຍໜ້າແມ່ນໄດ້ຖືກຮັບຮູ້ໃນວັນທີ່ມີທຸລະກຳເກີດຂຶ້ນ;

(ຂ) ລາຍຮັບດ້ານການໃຫ້ຄຳປຶກສາ ແລະ ຄຳແນະນຳແມ່ນໄດ້ຖືກຮັບຮູ້ເມື່ອທຸລະກຳທີ່ກ່ຽວຂ້ອງໄດ້ເກີດຂຶ້ນ ຫຼື ການບໍລິການ ທີ່ຕິດພັນມີຄວາມຮຽກຮ້ອງຕ້ອງການ;

(ຄ) ຄ່າທຳນຽມການຄໍ້າປະກັນໄດ້ຖືກຮັບຮູ້ເປັນລາຍຮັບເມື່ອໄດ້ແຈ້ງສິດທີ່ຈະໄດ້ຮັບການຊຳລະເງິນ ອີງຕາມເງື່ອນໄຂຂອງຂໍ້ກຳນົດ ແລະ/ຫຼື ການຕົກລົງການຄໍ້າປະກັນ.

(ii) ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດ

ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດແມ່ນຖືກຮັບຮູ້ໃນພື້ນຖານຄ້າງຮັບ ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນເຈົ້ສເຍແຕ່ການເກັບລວບລວມແມ່ນມີຄວາມໜ້າສົງໃສ.

(iii) ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ

ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບຖືກຮັບຮູ້ ເມື່ອມີສິດທີ່ຈະໄດ້ຮັບຈາກການຊຳລະຂອງບໍລິສັດເກີດຂຶ້ນ ຍົກເວັ້ນເມື່ອມີຄວາມບໍ່ແນ່ນອນໃນການເກັບຄືນລາຍຮັບທີ່ຖືກຮັບຮູ້ໃນກໍລະນີດັ່ງກ່າວ, ລາຍຮັບເງິນປັນຜົນໄດ້ຖືກຮັບຮູ້ ບົນພື້ນຖານເງິນສົດ.

3.10. *ອາກອນກຳໄລ*

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລຂອງປີປັດຈຸບັນ, ແມ່ນອີງຕາມກົດໝາຍສ່ວຍສາອາກອນທີ່ນຳໃຊ້ໃນ ສປປ ລາວ. ບໍລິສັດມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລກ່ອນອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2020. ການແຈ້ງອາກອນຂອງບໍລິສັດຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.11. ຄັງສຳຮອງ

ຄັງສຳຮອງຕາມລະບຽບການ

ອີງຕາມມາດຕາ 154, ກົດໝາຍ ວ່າດ້ວຍວິສາຫະກິດ ລົງວັນທີ 29 ທັນວາ 2022, ບໍລິສັດ ຈຳເປັນຕ້ອງໄດ້ຫັກ 10% ຂອງກຳໄລ ຫຼັງອາກອນໃນແຕ່ລະປີ, ຫຼັງຈາກຫັກຂາດທຶນສະສົມ (ຖ້າມີ) ເຂົ້າໃນຄັງສຳຮອງຕາມລະບຽບການ. ເມື່ອຄັງສຳຮອງນີ້ສະສົມ ເຖິງ 50% ຂອງທຶນຈົດທະບຽນ, ບໍລິສັດອາດຈະໂຈະການຫັກດັ່ງກ່າວ, ເວັ້ນເສຍແຕ່ໄດ້ລະບຸໄວ້ໃນລະບຽບຂໍ້ບັງຄັບຂອງ ບໍລິສັດ. ຄັງສຳຮອງນີ້ຈະຖືກນຳໃຊ້ເຂົ້າໃນການເກັບຄືນຈາກການຂາດທຶນຂອງບໍລິສັດ, ເວັ້ນເສຍແຕ່ກົດໝາຍສະບັບອື່ນໄດ້ກຳ ນົດໄວ້.

ຄັງສຳຮອງຂະຫຍາຍທຸລະກິດ

ຄັງສຳຮອງຂະຫຍາຍທຸລະກິດແມ່ນຖືກສ້າງຂຶ້ນໃນແຕ່ລະປີອີງຕາມການຕັດສິນໃຈຂອງຄະນະອຳນວຍການ.

4. ເງິນສົດ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ເງິນສົດ	132,544,571	-
ເງິນຝາກຢູ່ທະນາຄານ ແຫ່ງ ສປປ ລາວ	1,000,000	1,000,000
ເງິນຝາກຢູ່ທະນາຄານ	55,691,727,030	5,788,133,108
ໃນນັ້ນ:		
- *ເງິນສົດຂອງບໍລິສັດ*	32,140,365,905	*1,591,743,476*
- *ເງິນສົດຂອງນັກລົງທຶນ (*)*	23,551,361,125	*4,196,389,632*
	55,825,271,601	**5,789,133,108**

5. ການລົງທຶນໃນຫຼັກຊັບ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ຫຼັກຊັບຖືຄອງໄວ້ເພື່ອຄ້າ		
ຕົ້ນທຶນ	28,651,410,771	38,079,575,521
ຂາດທຶນສຸດທິທີ່ບໍ່ເກີດຂຶ້ນຈິງຈາກມູນຄ່າຍຸຕິທຳ	(5,467,964,201)	(9,658,012,221)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**23,183,446,570**	**28,421,563,300**

6. ເງິນຝາກມີກຳນົດ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ເງິນຝາກມີກຳນົດ		
ເງິນຝາກມີກຳນົດໄລຍະສັ້ນ	15,500,000,000	10,000,000,000
ເງິນຝາກມີກຳນົດໄລຍະຍາວ	-	15,000,000,000
	15,500,000,000	**25,000,000,000**

7. ຊັບສິນໝຸນວຽນອື່ນໆ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ຈ່າຍລ່ວງໜ້າຄ່າເຊົ່າ	674,492,701	780,390,981
ຈ່າຍລ່ວງໜ້າຄ່າປະກັນໄພ	-	97,973,409
ກອງທຶນຮ່ວມເພື່ອຊຳລະທິດແທນຄວາມສ່ຽງຫຼັກຊັບ	141,273,971	136,817,050
ອື່ນໆ	7,099,688,041	129,970,300
	7,915,454,713	**1,145,151,740**

8. ຊັບສິນບັດຄົງທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ 30 ກັນຍາ 2025 ມີດັ່ງລຸ່ມນີ້:

	ການປັບປຸງ ແລະ ການຕົບແຕ່ງ	*ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ*	*ພາຫະນະ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*
ຕົ້ນທຶນ				
ນະວັນທີ 1 ມັງກອນ 2025	3,025,263,669	4,447,531,448	1,256,389,000	8,729,184,117
ເພີ່ມຂຶ້ນພາຍໃນປີ	-	141,126,900	-	141,126,900
ສະສາງ	(1,751,498,900)	(657,530,260)	-	(2,409,029,160)
ນະວັນທີ 30 ກັນຍາ 2025	1,307,162,055	3,897,730,802	1,256,389,000	6,461,281,857
ຄ່າຫຼຸ້ຍຫ້ຽນສະສົມ				
ນະວັນທີ 1 ມັງກອນ 2025	1,067,175,316	4,064,487,438	1,256,389,000	6,388,051,754
ຄ່າຫຼຸ້ຍຫ້ຽນພາຍໃນປີ	80,840,318	180,245,891	-	261,086,209
ສະສາງ	(1,751,498,900)	(657,530,260)	-	(2,409,029,160)
ນະວັນທີ 30 ກັນຍາ 2025	(603,483,266)	3,587,203,069	1,256,389,000	4,240,108,803
ມູນຄ່າຍັງເຫຼືອຕາມບັນຊີສຸດທິ				
ນະວັນທີ 1 ມັງກອນ 2025	1,958,088,353	383,044,010	-	2,341,132,363
ນະວັນທີ 30 ກັນຍາ 2025	1,877,248,035	343,925,019	-	2,221,173,054

8. ຊັບສິນບັດຄົງທີ່ມີຕົວຕົນ (ຕໍ່)

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ມີດັ່ງລຸ່ມນີ້:

	ການປັບປຸງ ແລະ ການຕົບແຕ່ງ ກີບ	*ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ ກີບ*	*ພາຫະນະ ກີບ*	*ລວມ ກີບ*
ຕົ້ນທຶນ				
ນະວັນທີ 1 ມັງກອນ 2024	1,029,460,690	4,108,027,095	1,256,389,000	6,393,876,785
ເພີ່ມຂຶ້ນພາຍໃນປີ	1,995,802,979	353,403,653	-	2,349,206,632
ສະສາງພາຍໃນປີ	-	(13,899,300)	-	(13,899,300)
ນະວັນທີ 31 ທັນວາ 2024	3,025,263,669	4,447,531,448	1,256,389,000	8,729,184,117
ຄ່າຫຼຸ້ຍຫ້ຽນສະສົມ				
ນະວັນທີ 1 ມັງກອນ 2024	1,000,946,991	3,993,682,408	1,256,389,000	6,251,018,399
ຄ່າຫຼຸ້ຍຫ້ຽນພາຍໃນປີ	66,228,325	72,274,929	-	138,503,254
ສະສາງພາຍໃນປີ	-	(1,469,899)	-	(1,469,899)
ນະວັນທີ 31 ທັນວາ 2024	1,067,175,316	4,064,487,438	1,256,389,000	6,388,051,754
ມູນຄ່າຍັງເຫຼືອຕາມບັນຊີສຸດທິ				
ນະວັນທີ 1 ມັງກອນ 2024	28,513,699	114,344,687	-	142,858,386
ນະວັນທີ 31 ທັນວາ 2024	1,958,088,353	383,044,010	-	2,341,132,363

9. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ 30 ກັນຍາ 2025 ມີດັ່ງລຸ່ມນີ້:

	ຊອບແວ
	ກີບ
ຕົ້ນທຶນ	
ນະວັນທີ 1 ມັງກອນ 2025	392,024,300
ເພີ່ມຂຶ້ນພາຍໃນປີ	-
ສະສາງພາຍໃນປີ	-
ນະວັນທີ 30 ກັນຍາ 2025	392,024,300
ຄ່າຫຼ້ຍຫ້ຽນສະສົມ	
ນະວັນທີ 1 ມັງກອນ 2025	389,430,502
ຄ່າຫຼ້ຍຫ້ຽນພາຍໃນປີ	640,241
ນະວັນທີ 30 ກັນຍາ 2025	389,641,572
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	
ນະວັນທີ 1 ມັງກອນ 2025	2,593,797
ນະວັນທີ 30 ກັນຍາ 2025	1,953,556

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ມີດັ່ງລຸ່ມນີ້:

	ຊອບແວ
	ກີບ
ຕົ້ນທຶນ	
ນະວັນທີ 1 ມັງກອນ 2024	392,024,300
ເພີ່ມຂຶ້ນພາຍໃນປີ	-
ສະສາງພາຍໃນປີ	-
ນະວັນທີ 31 ທັນວາ 2024	392,024,300
ຄ່າຫຼ້ຍຫ້ຽນສະສົມ	
ນະວັນທີ 1 ມັງກອນ 2024	388,527,637
ຄ່າຫຼ້ຍຫ້ຽນພາຍໃນປີ	902,865
ສະສາງພາຍໃນປີ	-
ນະວັນທີ 31 ທັນວາ 2024	389,430,502
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	
ນະວັນທີ 1 ມັງກອນ 2024	3,496,663
ນະວັນທີ 31 ທັນວາ 2024	2,593,797

10. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ຮຸ້ນອອກໂດຍ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ		
ຕົ້ນທຶນ	53,294,070,000	51,622,155,000
ມູນຄ່າຍຸຕິທຳທີ່ບໍ່ເກີດຂຶ້ນຈິງສຸດທິ ກຳໄລ/(ຂາດທຶນ)	11,935,350,000	11,938,485,000
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**65,229,420,000**	**63,560,640,000**

11. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ການລົງທຶນໄລຍະສັ້ນ		
ຮຸ້ນລັດຖະບານອອກໂດຍກະຊວງການເງິນ	-	2,273,336,000
ຮຸ້ນລັດຖະບານອອກໂດຍທະນາຄານ ແຫ່ງ ສປປ ລາວ	-	-
	-	**2,273,336,000**
ການລົງທຶນໄລຍະຍາວ		
ຮຸ້ນລັດຖະບານອອກໂດຍກະຊວງການເງິນ	12,016,361,080	12,690,537,400
	12,016,361,080	**12,690,537,400**

12. ເງິນກູ້ຢືມໄລຍະສັ້ນ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ບໍລິສັດ ພັດທະນາສຸນເສດຖະກິດການຄ້າຄົບວົງຈອນໜອງ ຈັນຕອນເໜືອ ຈຳກັດ	26,248,421,223	26,248,421,223
	26,248,421,223	**26,248,421,223**

13. ລາຍຮັບລໍຖ້າສະສາງ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ລາຍຮັບລໍຖ້າສະສາງຈາກການຂາຍຮຸ້ນ	8,635,769,765	8,635,769,765
	8,635,769,765	**8,635,769,765**

14. ໜີ້ຕ້ອງສົ່ງໃຫ້ລູກຄ້າ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ບັນຊີຊຳລະສະສາງຂອງລູກຄ້າ - ຄ່ານາຍໜ້າ	9,305,774,486	4,196,389,632
	9,305,774,486	**4,196,389,632**

15. ເງິນປະໂຫຍດຂອງພະນັກງານ

	30 ກັນຍາ 2025	*31 ທັນວາ 2024*
	ກີບ	*ກີບ*
ໂບນັດ ແລະ ກອງທຶນສະຫວັດດີການ	-	342,357,183
ໜີ້ສິນເງິນເດືອນ	26,134,000	26,408,427
	26,134,000	**368,765,610.00**

16. ທຶນຈົດທະບຽນທີ່ຖອກແລ້ວ

	30 ກັນຍາ 2025		*31 ທັນວາ 2024*	
ຜູ້ຖືຮຸ້ນ	*% ຄວາມເປັນຂອງເຈົ້າ*	*ກີບ*	*% ຄວາມເປັນຂອງເຈົ້າ*	*ກີບ*
ທະນາຄານ ສິ່ງເສີມກະສິກຳ	36.90%	41,000,000,000	41%	41,000,000,000
ບໍລິສັດ ລາວອຸດສາຫະກຳຂໍ້ມູນ ຂ່າວສານ ຈຳກັດ	18.00%	20,000,000,000	20%	20,000,000,000
ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ	35.10%	39,000,000,000	39%	39,000,000,000
ມວນຊົນທົ່ວໄປ	10.00%	11,111,111,200	-	-
	100%	**111,111,111,200**	**100%**	**100,000,000,000**

17. ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມສຸດທິ

	ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025 ກີບ	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2024 ກີບ*
ລາຍຮັບ		
ຄ່ານາຍໜ້າຊື້-ຂາຍ ຫຼັກຊັບ	12,608,141	60,100,691
ຄ່າທີ່ປຶກສາທາງດ້ານການເງິນ	5,149,686,185	1,923,042,063
ຄ່າທຳນຽມເປັນຕົວແທນການຂາຍ	6,254,069,263	4,201,638,853
	11,416,363,590	6,184,781,607
ລາຍຈ່າຍ		
ດ້ານການເງິນ	(455,639,000)	(79,025,250)
ຄ່າທຳນຽມເປັນຕົວແທນການຂາຍຫຼັກຊັບ	-	(132,936,000)
ຄ່າທຳນຽມຜູ້ຈຳໜ່າຍ	(126,606,577)	(250,217,140)
ຄ່ານາຍໜ້າອື່ນໆ ຈາກການຂາຍຫຼັກຊັບ	(1,093,105)	(4,237,920)
	(583,338,682)	(466,416,310)
ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ, ສຸດທິ	**10,833,024,907**	**5,718,365,297**

18. ລາຍຈ່າຍອື່ນໆໃນການດຳເນີນງານ

	ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2025 ກີບ	*ສຳລັບໄລຍະສາມເດືອນ ຂອງໄຕມາດ III ສິ້ນສຸດ ວັນທີ 30 ກັນຍາ 2024 ກີບ*
ຄ່າເຊົ່າ	229,823,911	(443,836,188)
ການບໍລິການຈາກພາຍນອກ	(131,513,263)	66,769,900
ລາຍຈ່າຍສຳລັບການບັນເທີງທາງດ້ານທຸລະກິດ	58,230,188	42,749,500
ຄ່າໃຊ້ຈ່າຍໃນການເດີນທາງ	182,485,686	123,157,773
ຄ່າໃຊ້ຈ່າຍສຳລັບສາທາລະນຸປະໂພກ	27,322,000	16,622,412
ຄ່າໃຊ້ຈ່າຍປະກັນໄພ	50,009,847	40,460,893
ຄ່າໄປສະນີ ແລະ ໂທລະຄົມມະນາຄົມ	13,017,256	11,880,573
ຄ່າໃຊ້ຈ່າຍການປະຊຸມ ແລະ ສຳມະນາ	254,332,000	329,361,112
ອາກອນ ແລະ ພັນທະອື່ນໆ	300,000	6,913,000
ຂາດທຶນອັດຕາແລກປ່ຽນ	178,203,539	188,424,942
ອື່ນໆ	269,914,064	220,444,572
	1,132,125,227	**602,948,488**

ອະນຸມັດໂດຍ:	ກວດກາ:	ກະກຽມໂດຍ:
ທ່ານ ລີ ລິນ	ທ່ານ ວຽງສະຫວັນ ໄຊຍະລາດ	ທ່ານ ນາງ ອຸເພັດ ຫຼວງລາດ
ຜູ້ອຳນວຍການໃຫຍ່	ຫົວໜ້າພະແນກກວດກາພາຍໃນ	ຫົວໜ້າພະແນກບັນຊີ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ພະຈິກ 2025